# ໜັງສື ເທຊາໂລນິກທີ ໑

ໃຈຄວາມສຳຄັນ: ມີຄວາມຫວັງດ້ວຍອົງພຣະຄຣິດ

ຈຳນວນບົດ: ໕ ບົດ

## ວ່າດ້ວຍເມືອງເທຊາໂລນິກ:

ໃນສໄມຂອງທ່ານໂປໂລນັ້ນ ເມືອງເທຊາໂລນິກໄດ້ເປັນເມືອງເອກໃນແຂວງມາເກໂດເນັຍແລະປະຈຸບັນນີ້ເອີ້ນວ່າເມືອງຊາໂລນິກ ໃນໜັງສືກິຈການບົດ ໑໗:໑—໙ ໄດ້ເລົ່າເຣື່ອງເດີມຂອງຄຣິສຕະຈັກໄວ້ ແລະເລົ່າເຫດທີ່ເກີດຂຶ້ນເມື່ອທ່ານໂປໂລກັບທ່ານຊີລາເດີນທາງ ໄປເມືອງນີ້ໃນຄັ້ງທີສອງ ເມື່ອພວກເພິ່ນປ່າວປະກາດໄດ້ສາມອາທິດ ກໍມີຄົນເຂົ້າມາເຊື່ອຫລາຍຄົນ ແຕ່ຄັນຖືກຂົ່ມເຫັງຈາກພວກຢູດາ ພວກເຂົາກໍພາກັນປົບໜີໄປຢູ່ທີ່ອື່ນ.

## ວ່າດ້ວຍເວລາທີ່ຂຽນ:

ການເດີນທາງໄປປ່າວປະກາດຄັ້ງທີສອງຂອງທ່ານໂປໂລ ໄດ້ມີຂຶ້ນໃນປີ ຄ.ສ. ໕໑—໕໕ (ກິຈການ ໑໕:໓໖; ໑໘:໒໒) ເມື່ອເພິ່ນອອກຈາກເມືອງເທຊາໂລນິກ ກໍໄປປ່າວປະກາດທີ່ເມືອງເບເຣ (ກິຈການ ໑໗:໑໐) ແລ້ວໄປເມືອງອາແຖນ (໑໗:໑໕) ແລະຄັ້ງສຸດທ້າຍໄປທີ່ເມືອງໂກລິນໂທ (ກິຈການ ໑໘:໑) ເພິ່ນໄດ້ພັກຢູ່ທີ່ເມືອງນີ້ເຖິງ ໑໘ ເດືອນ (ກິຈການ ໑໘:໑໑) ທ່ານໂປໂລຢາກໄປຢ້ຽມຢາມພວກພີ່ນ້ອງທີ່ເຊື່ອໃໝ່ໃນເມືອງເທເຊໂລນິກທີ່ສຸດ ເພິ່ນໄດ້ພຍາຍາມທີ່ຈະເດີນທາງໄປເຖິງ

ສອງເທື່ອ ແຕ່ກໍໄປບໍ່ໄດ້ ເພາະຊາຕານມາຂັດຂວາງໄວ້ (໑ ເທຊາ-ໂລນິກ ໒:໑໘) ເພິ່ນຈຶ່ງສົ່ງທ່ານຕີໂມເຕໄປຢ້ຽມຢາມແທນ (໓:໔) ແລະເມື່ອທ່ານຕີໂມເຕໄດ້ກັບຄືນມາ ທ່ານໂປໂລກໍຂຽນໜັງສືນີ້ສົ່ງໄປ. (໓:໖)

ສະນັ້ນພວກເຮົາຈຶ່ງເຂົ້າໃຈວ່າ ທ່ານໂປໂລໄດ້ຂຽນໜັງສືນີ້ທີ່ ເມືອງໂກລິນໂທເມື່ອປີ ຄ.ສ. ໔໒ ຄືໃນເວລາເພິ່ນເດີນທາງໄປ ຄັ້ງທີສອງ ນັ້ນ ແລ້ວຕໍ່ມາບໍ່ເຖິງປີ ພວກທີ່ເຊື່ອໃໝ່ກໍໄດ້ຮັບໜັງສືນີ້.

## ວ່າດ້ວຍຄວາມມຸ່ງໝາຍ:

໑. ດັ່ງໄດ້ຊາບແລ້ວວ່າ ທ່ານໂປໂລບໍ່ສາມາດໄປຢ້ຽມຢາມພວກເຂົາໄດ້ ສນັ້ນເພິ່ນຈຶ່ງໄດ້ສົ່ງໜັງສືນີ້ໄປເລົ້າໂລມອຸ້ມຊູພວກເຂົາ ໃນເວລາທີ່ ພວກເຂົາຖືກຍາກຖືກຂົ່ມເຫັງເພາະຄວາມເຊື່ອນັ້ນ ບົດ ໑:໖; ໒:໑໔

໒. ເພິ່ນຈຳເປັນທີ່ຈະຕ້ອງແກ້ຂໍ້ກ່າວຫາຂອງບາງຄົນທີ່ຟ້ອງເພິ່ນກ່ຽວກັບ ຄວາມປະພຶດຂອງຊາດເພິ່ນນັ້ນ ບົດ ໒:໑—໑໐.

໓. ເພື່ອສະແດງຄວາມຮັກແພງໄປຍັງພວກເຂົາ ແລະແຈ້ງຄວາມປະສົງ ວ່າ ເພິ່ນຢາກໄປຢ້ຽມຢາມພວກເຂົາຢູ່ ພ້ອມທັງສະແດງຄວາມຍິນດີ ໃນຂ່າວທີ່ທ່ານຕີໂມເຕໄດ້ສົ່ງໃຫ້ແລ້ວ ບົດ ໒:໑໗—໒໐:໓:໖—໘

໔. ເພື່ອຕັກເຕືອນພວກເຂົາບໍ່ໃຫ້ເອົາໃຈໃສ່ຫລືຣະມັດຣະວັງ ຣິດຄອງອັນເກົ່າແກ່ ໂດຍໃຫ້ດຳເນີນຊີວິດໃນທາງຖືກຕ້ອງບໍຣິສຸດ (໔:໑—໘) ແລະ ໃຫ້ທຳ ມາຫາກິນ ຕາມ ສົມຄວນ ແກ່ສພາບ ຂອງຄົນ ຄຣິສຕຽນ ບົດ ໔:໑໑—໑໒

໕. ມີພວກ ພີ່ນ້ອງບາງຄົນ ໄດ້ອຸກໃຈນຳພວກ ທີ່ເຊື່ອຊຶ່ງໄດ້ຕາຍໄປແລ້ວ ໂດຍຄິດວ່າ ພວກເຂົາຈະ ບໍ່ເຫັນການ ສະເດັດມາຂອງ ພຣະເຢຊູຄຣິດ ດ້ວຍເຫດນີ້ ທ່ານໂປໂລຈຶ່ງໄດ້ຂຽນເຣື່ອງ ການສະເດັດມາ ຂອງພຣະ-ເຢຊູຄຣິດ ເພື່ອ ເປັນ ການ ເລົ້າໂລມ ແລະ ອອຍໃຈ ພວກ ເຂົາ ບົດ ໔:໑໓—໑໘

໖. ເພື່ອໃຫ້ພວກເຂົາຄອງຖ້າວັນສະເດັດມາຂອງພຣະເຢຊູຄຣິດ (໕:໑—໑໑) ແລະແນະນຳໃຫ້ພວກເຂົາຮູ້ຈັກກັບພວກຄຣູສອນ ບົດ ໕:໑໒

ວ່າດ້ວຍເນື້ອຄວາມ:

ໃນໜັງສືນີ້ພວກເຮົາໄດ້ຮູ້ເຣື່ອງການ ປະພຶດຂອງພວກ ຄຣິສຕຽນເດີມ ຄວາມຈິງແລ້ວພວກເຂົາໄດ້ເດີນກວ່າພວກເຮົາ ຄວາມເຊື່ອຂອງພວກເຂົາໄດ້ຊ່າລືໄປທົ່ວແຂວງນັ້ນ ແລະພວກເຂົາທຸກຄົນໄດ້ເອົາໃຈໃສ່ໃນພຣະອົງເຈົ້າ ກິຈການທີ່ພວກເຂົາເຮັດໄດ້ດີ ຄືການເອີ້ນຈາກຮູບເຄົາຣົບຄືນມາຫາພຣະເຈົ້າ ບົດ ໑:໙—໑໐ ນັ້ນກໍຄືພວກເຂົາມີຄວາມເຊື່ອ ມີຄວາມຮັກແລະມີຄວາມຫວັງໃຈ.

ເນື້ອໃນໃຈຄວາມຂອງໜັງສືນີ້ ກໍຄືການສະເດັດກັບມາຂອງພຣະເຢຊູຄຣິດ (໑:໑໐; ໒:໑໙; ໓:໑໓ ໔:໑໖; ໕:໒໓) ດັ່ງມີຣາຍລະອຽດຕໍ່ລົງໄປນີ້:

໑. ການສະເດັດກັບມາຂອງພຣະອົງ ເປັນເຫດໃຫ້ເຮົາປະໃຈເກົ່າເອົາໃຈໃໝ່ ບົດ ໑

໒. ການສະເດັດກັບມາຂອງພຣະອົງ ເປັນເຫດຊັກຊວນໃຫ້ມີ

ການປະຕິບັດ ຄືທ່ານໄປໂລນັ້ນເພິ່ນບໍ່ໄດ້ເວົ້າເພື່ອໃຫ້ຄົນ ຊອບໃຈ ແຕ່ເວົ້າເພື່ອໃຫ້ຊອບພຣະໄທຂອງພຣະເຈົ້າ ເພິ່ນຮັບໃຊ້ພວກເຂົາເໝືອນກັບເປັນແມ່ ບົດ ໒:໑໓—໑໖

໓. ການສະເດັດກັບມາຂອງພຣະອົງ ເປັນເຫດໃຫ້ຕັ້ງຢູ່ໃນ ຄວາມບໍຣິສຸດ ເພື່ອເວັ້ນຈາກການຕິຕຽນນິນທາ

ບົດ ໓—໔:໑໒

໔. ການສະເດັດກັບມາຂອງພຣະອົງ ເປັນຕົ້ນເຫດໃຫ້ມີຄວາມ ຫວັງແລະຄວາມເລົ້າໂລມໃຈ ບົດ ໔:໑໓—໑໘

໕. ການສະເດັດກັບມາຂອງພຣະອົງ ເປັນຕົ້ນເຫດໃຫ້ຣະມັດ-ຣະວັງ ເພາະການສະເດັດມາຂອງພຣະອົງເໝືອນກັບຂະໂມຍ

ບົດ ໕

ວ່າດ້ວຍຫົວຂໍ້ບົດ:

ບົດທີ ໑ ວ່າດ້ວຍການປະໃຈເກົ່າເອົາໃຈໃໝ່

ບົດທີ ໒ ວ່າດ້ວຍການບົວຣະບັດ

ບົດທີ ໓ ວ່າດ້ວຍຄວາມເຊື່ອ

ບົດທີ ໔ ວ່າດ້ວຍການຕັ້ງຢູ່ໃນຄວາມບໍຣິສຸດ

ບົດທີ ໕ ວ່າດ້ວຍການສະເດັດຂຶ້ນຟ້າສວັນ